**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສຳນັກງານນາຍົກລັດຖະມົນຕີ

ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ເລກທີ: 1226 /ສນຍ-ອວຕຊ

ນະຄອນຫລວງວຽງຈັນ, ວັນທີ 17 ກໍລະກົດ 2009

# ຂໍ້ຕົກລົງ

## ວ່າດ້ວຍການກວດກາຄຸນນະພາບສິນຄ້າ

- ອີງຕາມກົດໝາຍວ່າດ້ວຍມາດຕະຖານ ສະບັບເລກທີ 13 ສພຊ ລົງວັນທີ 26 ທັນວາ 2007
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 85/ນຍ ລົງວັນທີ 2/11/1995 ວ່າດ້ວຍການຄຸ້ມຄອງມາດຕະຖານ ແລະ ຄຸນນະພາບຜະລິດຕະພັນສິນຄ້າ.
- ອີງຕາມການຕົກລົງຂອງກອງປະຊຸມນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 5/12/2000 ແລະ ໃບແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 2053 ລົງວັນທີ 13/12/2000 ກ່ຽວກັບການອະນຸມັດປະກາດໃຊ້ມາດຕະຖານແຫ່ງຊາດ ແລະ ໃຫ້ຈັດຕັ້ງຄະນະກວດກາຄຸນນະພາບສິນຄ້າລະດັບຊາດຂຶ້ນ.
- ອີງຕາມຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງຄຸນນະພາບສິນຄ້າ ແລະ ປົກປ້ອງສິດຜົນປະໂຫຍດຂອງຜູ້ບໍລິໂພກ.

ລັດຖະມົນຕີປະຈຳສຳນັກງານນາຍົກລັກຖະມົນຕີ

ຫົວໜ້າອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ອອກຂໍ້ຕົກລົງ:

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການ ຄຸ້ມຄອງຄຸນນະພາບສິນຄ້າຕາມມາດຕະຖານແຫ່ງຊາດທີ່ປະກາດໃຊ້ ຫຼື ມາດຕະຖານ ຂອງ ຕ່າງປະເທດ ຫຼື ສາກົນທີ່ ສປປ ລາວ ຮັບຮູ້ ຫຼື ທີ່ໄດ້ເຊັນສັນຍາຮັບຮູ້ເຊິ່ງກັນ ແລະ ກັນ ເພື່ອ ແນໃສ່ ຮັບປະກັນຄວາມປອດໄພທາງດ້ານສຸຂະພາບປ້ອງກັນການຫຼອກລວງຜູ້ບໍລິໂພກ ແລະ ຮັກສາສິ່ງແວດລ້ອມທີ່ມີຜົນສະທ້ອນຈາກສິນຄ້າບໍ່ໄດ້ມາດຕະຖານ ຫຼື ລະບຽບການເຕັກນິກ ທີ່ບັງຄັບໃຊ້ໃນ ສປປ ລາວ.

**ມາດຕາ 2. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ໃນການຄຸ້ມຄອງສິນຄ້າທີ່ນອນໃນລາຍການສິນຄ້າຄວບຄຸມ, ແຕ່ ຍົກເວັ້ນຜະລິດຕະພັນ ແລະ ສິນຄ້າທີ່ພາຍໃຕ້ໂຄງການກູ້ຢືມຂອງລັດຖະບານແຫ່ງ ສປປ ລາວ, ໂຄງການລົງທຶນຂອງຕ່າງປະເທດແມ່ນຕ້ອງໄດ້ມາແຈ້ງນຳອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງ ຊາດ. ແຕ່ສິນຄ້າດັ່ງກ່າວນຳໄປຈຳໜ່າຍຕາມທ້ອງຕະຫຼາດກໍຈະຕົກຢູ່ໃນ ການຄຸ້ມຄອງຂອງຂໍ້ຕົກລົງ ສະບັບນີ້.

**ມາດຕາ 3.** ບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນທຸລະກິດນຳເຂົ້າ (ຕໍ່ໄປນີ້ເອີ້ນຫຍໍ້ວ່າຜູ້ນຳເຂົ້າ) ຕ້ອງມີຄວາມ ຮັບຜິດຊອບຕໍ່ຄຸນນະພາບຜະລິດຕະພັນ ແລະ ສິນຄ້າຂອງຕົນ ແລະ ໃຫ້ການຮ່ວມມືກັບລັດໃນ ການເຄື່ອນໄຫວກວດກາຄຸນນະພາບຜະລິດຕະພັນ ແລະ ສິນຄ້າດັ່ງກ່າວ.

**ມາດຕາ 4. ການອອກໃບຢັ້ງຢືນຄຸນນະພາບ**

ຜູ້ນຳເຂົ້າສິນຄ້າ ທີ່ນອນຢູ່ໃນລາຍການສິນຄ້າຄວບຄຸມ ທີ່ປະກາດໃຊ້ມາດຕະຖານ ແຫ່ງຊາດ ຫຼື ມາດຕະຖານຕ່າງປະເທດ ຕ້ອງໄດ້ຂໍການຢັ້ງຢືນ ທາງດ້ານຄຸນນະພາບຂອງສິນຄ້ານຳອົງການ ວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ຫຼື ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫລວງ ຫຼື ການຈັດຕັ້ງຂອງແຂວງທີ່ຖືກມອບໝາຍ ກ່ອນການຮັບອະນຸຍາດນຳເຂົ້າຈາກ ຂະແໜ ງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 5. ການແຈ້ງຄຸນນະພາບຜະລິດຕະພັນ ແລະ ສິນຄ້ານຳເຂົ້າ**

ການແຈ້ງຄຸນນະພາບຜະລິດຕະພັນ ແລະ ສິນຄ້ານຳເຂົ້າສິນຄ້າທີ່ນອນຢູ່ໃນບັນຊີຄວບຄຸມ (ກ່ຽວກັບ ວັດສະດຸການກໍ່ສ້າງ, ນ້ຳມັນ ແລະ ໄຟຟ້າເອເລັກໂຕຣນິກ) ແລະ ສິນຄ້າ ທີ່ນອນ ຢູ່ໃນບັນຊີຄຸ້ມ ຄອງອື່ນໆ ແຕ່ລະຄັ້ງຕ້ອງໃຫ້ມີໃບຢັ້ງຢືນຄຸນນະພາບ ຫຼື ໃບຢັ້ງຢືນຄວາມສອດຄ່ອງ ຈາກອົງການ ກວດກາຢັ້ງຢືນຄຸນນະພາບ ຈາກປະເທດທີ່ນຳເຂົ້າຂັດຕິດມາພ້ອມ.

**ມາດຕາ 6. ໜ່ວຍງານກວດກາຄຸນນະພາບ**

ໜ່ວຍງານກວດກາຄຸນນະພາບ ແມ່ນໜ່ວຍງານຫນຶ່ງສ້າງຕັ້ງຂຶ້ນພາຍໃຕ້ການຊີ້ນຳຂອງ ອົງການ ວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ຫຼື ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ ຫຼື ນະຄອນຫລວງ ຫຼື ການຈັດຕັ້ງຂອງ ແຂວງທີ່ຖືກມອບໝາຍ. ໂດຍການປະສານສົມທົບກັບສະພາ

ມາດຕະຖານແຫ່ງຊາດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເຊິ່ງມີສິດ ແລະ ໜ້າທີ່ເຕັມສ່ວນຕາມລະບຽບກົດໝາຍ.

**ມາດຕາ 7. ໜ່ວຍງານກວດກາຄຸນນະພາບມີໜ້າທີ່**ດັ່ງນີ້:

1. ສົມທົບກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງທຳການກວດກາຄຸນນະພາບ ໃຫ້ໄດ້ຕາມກຳນົດເວລາທີ່ໄດ້ຕົກລົງເຫັນດີ ໃຫ້ຜູ້ອະນຸຍາດນຳເຂົ້າ.
2. ດຳເນີນການກວດກາໃຫ້ມີປະສິດທິພາບ ແລະ ໃຫ້ໄດ້ຕາມກຳນົດເວລາ, ກໍ່ສ້າງຍົກລະດັບພະນັກງານວິຊາການຂອງຕົນເພື່ອຮັບປະກັນໃຫ້ໄດ້ລະດັບຄວາມສາມາດອັນແນ່ນອນ ພ້ອມທັງມີຄວາມສັດຊື່ບໍລິສຸດ ແລະ ມີຄວາມຮັບຜິດຊອບສູງຕໍ່ວຽກງານ ທີ່ໄດ້ຖືກມອບໝາຍໃຫ້ກວດກາ.
3. ແນະນຳຜູ້ນຳເຂົ້າສິນຄ້າກ່ຽວກັບຂັ້ນຕອນການແຈ້ງຂໍອະນຸຍາດ ສິນຄ້ານຳເຂົ້າ ແລະ ການກວດກາຄຸນນະພາບສິນຄ້າຂອງຕົນ.
4. ເກັບຮັກສາ ແລະ ເຜີຍແຜ່ (ຖ້າມີການຮຽກຮ້ອງ) ຂໍ້ມູນຕ່າງໆກ່ຽວກັບການ ກວດກາ ຄຸນນະພາບສິນຄ້າປະເພດຕ່າງໆ.
5. ສະຫລຸບລາຍງານໃຫ້ຂັ້ນເທິງ ກ່ຽວກັບສະພາບການເຄື່ອນໄຫວ ກວດກາດັ່ງມີເນື້ອໃນຕົ້ນຕໍຄື:

- ບັນຊີລາຍຊື່ບັນດາຜູ້ນຳເຂົ້າທີ່ໄດ້ກວດກາຢັ້ງຢືນຄຸນນະພາບສິນຄ້າຂອງຕົນ.
- ປະເພດ ແລະ ຈຳນວນສິນຄ້າທີ່ໄດ້ຜ່ານການກວດກາ.
- ບັນຊີການເງິນ ແລະ ມູນຄ່າສິນຄ້າທີ່ໄດ້ກວດກາ.
- ສະພາບການຮ້ອງຟ້ອງ ແລະ ຮ້ອງທຸກຂອງຜູ້ນຳເຂົ້າ ແລະ ຜູ້ຊົມໃຊ້.
- ສະເໜີມາດຕະການແກ້ໄຂ ແລະ ຂໍ້ສະເໜີອື່ນໆ.

**ມາດຕາ 8. ໜ່ວຍງານກວດກາຄຸນນະພາບມີສິດ**ດັ່ງນີ້:

1. ກວດກາຄຸນນະພາບສິນຄ້າຕາມທີ່ໄດ້ກຳນົດໄວ້ໃນລາຍການສິນຄ້າຄວບຄຸມ(ກ່ຽວກັບວັດ ສະດຸການກໍ່ສ້າງ ແລະ ໄຟຟ້າເອເລັກໂຕຣນິກ)
2. ເກັບຕົວຢ່າງສິນຄ້າເພື່ອນຳໄປກວດສອບໃນກໍລະນີຈຳເປັນ.
3. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງໃນການກວດກາ, ສັ່ງໂຈະຊົ່ວຄາວສິນຄ້ານຳເຂົ້າທີ່ເຫັນວ່າບໍ່ຖືກຕ້ອງຕາມມາດຕະຖານແຫ່ງຊາດ ຫຼື ມາດຕະຖານຂອງຕ່າງ ປະເທດ.

**ມາດຕາ 9. ເອກະສານຢັ້ງຢືນຄຸນນະພາບ ແລະ ສະຖານທີ່ກວດກາ**

ການແຈ້ງຂໍອະນຸຍາດນໍາເຂົ້າສິນຄ້າແຕ່ລະຄັ້ງຕ້ອງໃຫ້ມີໃບຢັ້ງຢືນຄຸນນະພາບ ຫຼື ໃບຢັ້ງຢືນ ຄວາມສອດຄ່ອງຈາກອົງການ ຢັ້ງຢືນຄຸນນະພາບ ຈາກຕ່າງປະເທດທີ່ນໍາເຂົ້າເຊິ່ງອາດຈະໄດ້ຮັບການກວດກາຢູ່ກັບດ່ານນໍາເຂົ້າ ຫຼື ຢູ່ກັບບ່ອນເກັບຮັກສາອີກເທື່ອໜຶ່ງ.

**ມາດຕາ 10. ການຕິດບັດກວດກາຂອງພະນັກງານກວດກາຄຸນນະພາບ**

ໜ່ວຍງານກວດກາຄຸນນະພາບທີ່ຈະລົງໄປກວດກາແຕ່ລະຄັ້ງຕ້ອງໄດ້ຕິດບັດກວດກາ ທີ່ອອກໃຫ້ໂດຍອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ຫຼື ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫລວງ ຫຼື ການຈັດຕັ້ງຂອງ ແຂວງທີ່ຖືກມອບໝາຍ.

**ມາດຕາ 11. ການແຈ້ງກວດກາຄຸນນະພາບ**

ຜູ້ນໍາເຂົ້າ ທີ່ມີສິນຄ້ານອນຢູ່ໃນລາຍການສິນຄ້າຄວບຄຸມ ທີ່ປະກາດໃຊ້ມາດຕະຖານແຫ່ງຊາດ ຫຼື ມາດຕະຖານຕ່າງປະເທດທີ່ຈະຕ້ອງຮັບການກວດການັ້ນ ຕ້ອງໄດ້ແຈ້ງນໍາອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ຫຼື ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ນະຄອນຫລວງ ຫຼື ການຈັດຕັ້ງຂອງ ແຂວງທີ່ຖືກມອບໝາຍ.

**ມາດຕາ 12. ການນັດກວດກາຄຸນນະພາບ**

ຜູ້ນໍາສິນຄ້າແຕ່ລະຄັ້ງທີ່ແຈ້ງຂໍອະນຸຍາດນໍາເຂົ້າ ຕ້ອງໄດ້ມີການຕົກລົງນັດໝາຍກ່ຽວກັບສະຖານທີ່ນໍາເຂົ້າສິນຄ້າທີ່ຈະຕ້ອງການໃຫ້ມີການກວດການໍາ ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ຫຼື ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫລວງ ຫຼື ການຈັດຕັ້ງຂອງ ແຂວງທີ່ຖືກມອບໝາຍ.

**ມາດຕາ 13. ການນໍາໃຊ້ໃບຢັ້ງຢືນຄຸນນະພາບສິນຄ້າ**

ໃບຢັ້ງຢືນກວດກາຄຸນນະພາບສິນຄ້າມີຜົນບັງຄັບໃຊ້ສະເພາະໃນກໍລະນີຄຸນນະພາບສິນຄ້າບໍ່ມີການປ່ຽນແປງສະພາບເດີມໂດຍຜ່ານຈາກການຂົນສົ່ງ, ການເກັບຮັກສາ ແລະ ມີອາຍຸໜຶ່ງປີ ແລະ ນໍາໃຊ້ໄດ້ຄັ້ງດຽວເທົ່ານັ້ນ.

**ມາດຕາ 14. ຄ່າທໍານຽມ ແລະ ຄ່າບໍລິການ**

ຜູ້ນໍາເຂົ້າທີ່ໄດ້ຮັບໃບຢັ້ງຢືນຄຸນນະພາບຕ້ອງໄດ້ເສຍຄ່າບໍລິການ ແລະ ຄ່າທໍານຽມນໍາອົງການ

ວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ນະຄອນຫລວງ ຫຼື ການຈັດຕັ້ງຂອງແຂວງທີ່ຖືກມອບໝາຍ ແລະ ຫ້ອງທົດລອງທີ່ກ່ຽວຂ້ອງ ດັ່ງນີ້:

1. ຄ່າໃບຄຳຮ້ອງ 1 ຊຸດ 5,000 ກີບ
2. ໃບຢັ້ງຢືນຄຸນນະພາບ 30,000 ກີບ
3. ຄ່າທົດສອບຄຸນນະພາບສິນຄ້າແຕ່ລະຄັ້ງໃຫ້ອີງໃສ່ມູນຄ່າຂອງການກວດສອບຕົວຈິງຂອງຫ້ອງທົດລອງກວດສອບທີ່ກ່ຽວຂ້ອງ.
4. ຄ່າບໍລິການກວດກາຄຸນນະພາບສິນຄ້ານຳເຂົ້າໃນຄັ້ງໜຶ່ງແມ່ນ 600,000 ກີບ

**ມາດຕາ 15. ຂໍ້ຫ້າມ**

ຫ້າມຜູ້ນຳເຂົ້າສິນຄ້າທີ່ນອນຢູ່ໃນລາຍການສິນຄ້າຄວບຄຸມທີ່ປະກາດໃຊ້ມາດຕະຖານ ແຫ່ງຊາດ ຫຼື ມາດຕະຖານຂອງຕ່າງປະເທດນຳເຂົ້າສິນຄ້າຕົນໂດຍບໍ່ໄດ້ຮັບການຢັ້ງຢືນຄຸນນະ ພາບຈາກອົງການ ວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫລວງ ຫຼື ການຈັດຕັ້ງຂອງແຂວງທີ່ຖືກມອບໝາຍ.

**ມາດຕາ 16. ຂໍ້ຫ້າມສຳລັບເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານກວດກາຄຸນນະພາບ**

ຫ້າມເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານກວດກາຄຸນນະພາບມີພຶດຕິກຳດັ່ງນີ້:

1. ຂາດຄວາມຮັບຜິດຊອບ ແລະ ປະລະໜ້າທີ່;
2. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸດຕິທຳ ຫຼື ລຳອຽງຕໍ່ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ;
3. ຮັບສິນບົນ, ສວຍໃຊ້ຕຳແໜ່ງ, ໜ້າທີ່, ອຳນາດເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
4. ມີພຶດຕິກຳອື່ນ ທີ່ເປັນຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 17.** ຜູ້ທີ່ມີຜົນງານໃນການປະຕິບັດຂໍ້ກຳນົດສະບັບນີ້ ແລະ ຜູ້ທີ່ເຄື່ອນໄຫວກວດກາຄຸນນະພາບສິນຄ້າຢ່າງມີປະສິດທິຜົນ ຫຼື ຜູ້ທີ່ມີຜົນງານໃນການຊອກເຫັນຜູ້ລະເມີດລະບຽບການຕ່າງໆ ກ່ຽວກັບການກວດກາຄຸນນະພາບຈະໄດ້ຮັບການຍ້ອງຍໍ ແລະ ຮັບຄ່າບຳເນັດຕາມການກຳນົດຂອງອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ຫຼື ອົງການຄຸ້ມຄອງລັດທີ່ກ່ຽວຂ້ອງອື່ນໆ.

**ມາດຕາ 18.** ຜູ້ນໍາເຂົ້າ ທີ່ມີສິນຄ້າທີ່ນອນຢູ່ໃນລາຍການສິນຄ້າຄວບຄຸມ ທີ່ໄດ້ປະກາດໃຊ້ມາດຕະຖານແຫ່ງຊາດມີການລະເມີດຂໍ້ກໍານົດສະບັບນີ້ ຫຼື ຫລົບຫລີກການກວດກາຄຸນນະພາບຈະຖືກກ່າວເຕືອນ ຫຼື ປັບໃຫມ:

ຄັ້ງທີ 1: ຈະຖືກປັບໃຫມ 10% ຂອງມູນຄ່າຊຸດສິນຄ້າທີ່ນໍາເຂົ້າ.

ຄັ້ງທີ 2: ຈະຖືກປັບໃຫມ 20% ຂອງມູນຄ່າຊຸດສິນຄ້າທີ່ນໍາເຂົ້າ.

ຄັ້ງທີ 3: ສົມທົບກັບຂະແໜງການທີ່ກ່ຽວຂ້ອງສັ່ງຢຸດຕິດໍາເນີນກິດຈະການ ແລະ ສົ່ງຟ້ອງດໍາເນີນຄະດີຕາມລະບຽບກົດຫມາຍ

**ມາດຕາ 19. ມາດຕະການທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ທີ່ລະເມີດກ່ຽວກັບການກວດກາຄຸນນະພາບສິນຄ້າ ແລະ ຂໍ້ຫ້າມ ທີ່ມີລັກສະນະເບົາບາງຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນ ຄ່າຕໍ່າກວ່າ ຫ້າແສນກີບ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດກໍ່ຈະຖືກປະ ຕິບັດວິໄນຕາມແຕ່ລະກໍລະນີດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ຕາມລະບຽບລັດຖະກອນ ພ້ອມທັງບັນທຶກໄວ້ ໃນສໍານວນເອກະສານ ຊີວະປະຫວັດຂອງຜູ້ກ່ຽວ;
2. ປົດຕໍາແໜ່ງ ຫຼື ຍົກຍ້າຍ ໄປຮັບໜ້າທີ່ອື່ນ ທີ່ມີຕໍາແໜ່ງຕໍ່າກວ່າເກົ່າ;
3. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບ ນະໂຍບາຍໃດໆ;

ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາ ໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຢ່າງ ຄົບຖ້ວນ.

**ມາດຕາ 20.** ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ມອບໃຫ້ກົມຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ ສົມທົບກັບສະພາມາດຕະຖານແຫ່ງຊາດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດ ກວດກາຄຸນນະພາບສິນຄ້ານໍາເຂົ້າຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 21.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງ ສາມສິບວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ທຸກຂໍ້ຕົກລົງ ແລະ ລະບຽບການອື່ນໆ ທີ່ໄດ້ປະກາດໃຊ້ ໃນເມື່ອກ່ອນຫາກຂັດກັບຂໍ້ຕົກ ລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ**
**ຫົວໜ້າ ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ**
**ສ.ຈ.ດຣ ບູນຕຽມ ພິດສະໄໝ**